# ກົດໝາຍ ວ່າດ້ວຍການພັດທະນາ
# ແລະ ປົກປ້ອງແມ່ຍິງ (ສະບັບປີ 2004)

## ມາດຕາ 6:

**ຄວາມໝາຍຂອງການພັດທະນາແມ່ຍິງ**

ການພັດທະນາແມ່ຍິງ ແມ່ນພາກສ່ວນໜຶ່ງຂອງການພັດທະນາຊັບພະຍາກອນມະນຸດ ເພື່ອເຮັດໃຫ້ແມ່ຍິງມີສຸຂະພາບແຂງແຮງ, ມີຄວາມຮູ້, ຄວາມສາມາດ ແລະ ມີຄຸນສົມບັດສິນທຳປະຕິວັດ.

**ມາດຕາ 8:**

**ເນື້ອໃນພື້ນຖານຂອງການພັດທະນາແມ່ຍິງ**

ການພັດທະນາແມ່ຍິງ ມີເນື້ອໃນພື້ນຖານດັ່ງນີ້:

- ການພັດທະນາທາງດ້ານຮ່າງກາຍ;
- ການພັດທະນາທາງດ້ານແນວຄິດຈິດໃຈ;
- ການພັດທະນາທາງດ້ານການສຶກສາ;
- ການພັດທະນາທາງດ້ານວິຊາຊີບ ແລະ ສີມືແຮງງານ.

ການພັດທະນາຄອບຄົວກໍເປັນປັດໃຈໜຶ່ງທີ່ສໍາຄັນໃຫ້ແກ່ການພັດທະນາດ້ານຕ່າງໆ ທີ່ກ່າວມາຂ້າງເທິງນີ້.

**ມາດຕາ 9:**

**ການພັດທະນາທາງດ້ານຮ່າງກາຍ**

ການພັດທະນາແມ່ຍິງທາງດ້ານຮ່າງກາຍ ແມ່ນການເຮັດໃຫ້ແມ່ຍິງມີການຂະຫຍາຍຕົວທາງດ້ານຮ່າງກາຍຢ່າງສົມບູນ, ມີສຸຂະພາບແຂງແຮງ, ມັນສະໝອງດີ, ມີຄຸນນະພາບຊີວິດທີ່ດີ ແລະ ມີອາຍຸຍືນ.

**ມາດຕາ 10:**

**ການພັດທະນາທາງດ້ານແນວຄິດຈິດໃຈ**

ການພັດທະນາແມ່ຍິງທາງດ້ານແນວຄິດຈິດໃຈ ແມ່ນການເຮັດໃຫ້ແມ່ຍິງມີສຸຂະພາບຈິດທີ່ດີ, ມີຈິດໃຈໜັກແໜ້ນເຂັ້ມແຂງ, ມີອຸດົມການ, ຄຸນສົມບັດສິນທຳປະຕິວັດ, ມີວັດທະນະທຳອັນດີງາມ, ມີກິລິຍາມາລະຍາດດີ, ມີຄວາມດຸໝັ່ນຂະຫຍັນພຽນ, ພ້ອມກັບສະມາຊິກຄອບຄົວຂອງຕົນສ້າງສັງຄົມ ແລະ ຄອບຄົວ ໃຫ້ຮັ່ງມີ, ຜາສຸກ ແລະ ກ້າວໜ້າ.

ມາດຕາ 11:

**ການພັດທະນາທາງດ້ານການສຶກສາ**

ການພັດທະນາແມ່ຍິງທາງດ້ານການສຶກສາ ແມ່ນການສ້າງເງື່ອນໄຂໃຫ້ແມ່ຍິງໄດ້ຮັບການສຶກສາຂັ້ນພື້ນຖານຢ່າງທົ່ວເຖິງ, ໄດ້ຮັບການສຶກສາທາງດ້ານວິທະຍາສາດທຳມະຊາດ ແລະ ສັງຄົມ ນັບມື້ນັບສູງຂຶ້ນ ແນໃສ່ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ແມ່ຍິງຢ່າງຮອບດ້ານ ແລະ ສົ່ງເສີມຜູ້ທີ່ມີພອນສະຫວັນ.

## ມາດຕາ 12:

### ການພັດທະນາທາງດ້ານວິຊາຊີບ ແລະ ສີມືແຮງງານ

ການພັດທະນາແມ່ຍິງທາງດ້ານວິຊາຊີບ ແລະ ສີມືແຮງງານ ແມ່ນການສ້າງເງື່ອນໄຂໃຫ້ແມ່ຍິງໄດ້ຮັບການຝຶກອົບຮົມວິຊາຊີບ, ມີສີມືແຮງງານ ແລະ ປະສົບການ, ມີວິໄນແຮງງານ ເພື່ອໃຫ້ແມ່ຍິງໄດ້ມີວຽກເຮັດງານທຳໃນສັງຄົມເຊັ່ນດຽວກັນກັບເພດຊາຍ.

## ມາດຕາ 13:

### ສິດສະເໝີພາບຍິງ-ຊາຍ

ສິດສະເໝີພາບຍິງ-ຊາຍ ແມ່ນຄວາມເທົ່າທຽມກັນໃນການພັດທະນາຕົນເອງ; ຍິງ ແລະ ຊາຍ ມີຄຸນຄ່າ ແລະ ໂອກາດເທົ່າທຽມກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ຄອບຄົວ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

预览已结束，完整报告链接和二维码如下：
https://www.yunbaogao.cn/report/index/report?reportId=5_19687